**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 3684/ກປ
ນະຄອນຫຼວງວຽງຈັນ, ວັນທີ 16 AUG 2022

# ຄຳແນະນຳ
# ກ່ຽວກັບ ການຢັ້ງຢືນ ແລະ ການຕັດຕົ້ນໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກ ທີ່ມີ ໃນທີ່ດິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 885/ຫສນຍ, ລົງວັນທີ 28 ກໍລະກົດ 2021;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມປ່າໄມ້ ສະບັບເລກທີ 4967/ກປມ, ລົງວັນທີ 04 ສິງຫາ 2022.

ເພື່ອຜັນຂະຫຍາຍ ມາດຕາ 40 ຂອງກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ຂໍ້ 2 ຂອງແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 885/ຫສນຍ, ລົງວັນທີ 28 ກໍລະກົດ 2021 ແລະ ເພື່ອຮັບປະກັນ ຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ສຳລັບການຈັດຕັ້ງປະຕິບັດ ຂັ້ນຕອນ, ວິທີການ, ກົນໄກປະສານງານ ແລະ ຄວາມຮັບຜິດຊອບ ກ່ຽວກັບ ການຢັ້ງຢືນ ແລະ ການຕັດຕົ້ນໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກ ທີ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປູກ ແລະ ປົກປັກຮັກສາ ມາເປັນເວລາດົນນານ, ພ້ອມທັງເປັນການຊຸກຍູ້ ຂະບວນການຄຸ້ມຄອງ ແລະ ນຳໃຊ້ ໃຫ້ສອດຄ່ອງຕາມລະບຽບການ ທັງເປັນການຊຸກຍູ້ສ້າງລາຍຮັບໃຫ້ແກ່ຜູ້ເປັນເຈົ້າຂອງ.

## ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ:

### 1. ຈຸດປະສົງ ແລະ ລະດັບຄາດໝາຍ

ເພື່ອຄຸ້ມຄອງ ຕົ້ນໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກ ທີ່ເປັນກຳມະສິດຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ເຂົ້າສູ່ລະບຽບກົດໝາຍ ແລະ ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ ກ່ຽວກັບ ການຢັ້ງຢືນ ແລະ ການຕັດຕົ້ນໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກ ທີ່ມີໃນທີ່ດິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.

ເພື່ອເປັນການເອກະພາບ ເງື່ອນໄຂ, ຂັ້ນຕອນ, ກົນໄກປະສານງານ ແລະ ການແບ່ງຄວາມຮັບຜິດຊອບ ກ່ຽວກັບ ການຢັ້ງຢືນ ແລະ ການຕັດຕົ້ນໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກ.

### 2. ຄວາມໝາຍ ແລະ ຄວາມສຳຄັນຂອງການຢັ້ງຢືນ ຕົ້ນໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກ

ການຢັ້ງຢືນ ຕົ້ນໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກ ແມ່ນການຢັ້ງຢືນກຳມະສິດ ແລະ ແຫຼ່ງທີ່ມາທີ່ຖືກຕ້ອງ ເພື່ອປະຕິບັດນະໂຍບາຍຕໍ່ຜູ້ເປັນເຈົ້າຂອງໃນການຕັດ, ເຄື່ອນຍ້າຍ, ຊື້ ຂາຍ ແລະ ສົ່ງອອກ.

ຕົ້ນໄມ້ທຳມະຊາດ ໝາຍເຖິງ ຕົ້ນໄມ້ ທີ່ເກີດຂຶ້ນຕາມທຳມະຊາດໃນຕົວເມືອງ, ແຄມທາງ, ສວນສາທາລະນະ, ດິນນາ, ດິນສວນ, ດິນປູກສ້າງ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລັດ ໄດ້ມອບສິດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍ.

ຕົ້ນໄມ້ປູກໃຫ້ໝາກ ໝາຍເຖິງ ຕົ້ນໄມ້ທີ່ໃຫ້ຜົນຜະລິດໝາກ ຊຶ່ງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງປູກ ແລະ ປົກປັກຮັກສາມາເປັນເວລາດົນນານ ໃນທີ່ດິນ ທີ່ລັດ ໄດ້ມອບສິດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍ.

## 3. ຫຼັກການ, ເງື່ອນໄຂ ແລະ ຂັ້ນຕອນ ການຢັ້ງຢືນ

### 3.1 ຫຼັກການ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຈຸດປະສົງ ອອກໃບຢັ້ງຢືນ ຕົ້ນໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກ ເພື່ອໃຊ້ສອຍໃນຄອບຄົວ ແລະ ເປັນສິນຄ້າ ຫຼື ສາທາລະນະປະໂຫຍດ ຕ້ອງໄດ້ໃຫ້ຈຸງານກະສິກຳ ແລະ ປ່າໄມ້ບ້ານ ເກັບກຳຂໍ້ມູນ, ຂຶ້ນບັນຊີ ເພື່ອສະເໜີ ອົງການປົກຄອງບ້ານອອກໃບຢັ້ງຢືນ ແລະ ຮັບຮູ້ຈາກຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ຕາມທີ່ໄດ້ກຳນົດໄວ້ໃນຄຳແນະນຳສະບັບນີ້.

### 3.2. ເງື່ອນໄຂ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງຕົ້ນໄມ້ ທີ່ມີຈຸດປະສົງຢັ້ງຢືນຕົ້ນໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກ ປະກອບດ້ວຍເງື່ອນໄຂ ດັ່ງນີ້:

ກ. ດ້ານກຳມະສິດຄອບຄອງ

ຕ້ອງມີເອກະສານໃດໜຶ່ງ ດັ່ງລຸ່ມນີ້:

- ໃບຕາດິນ;
- ໃບຢັ້ງຢືນການນຳໃຊ້ທີ່ດິນ (ຕາມ ມາດຕາ 44 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019);
- ໃບຢັ້ງຢືນສິດຄອບຄອງ ແລະ ສິດນຳໃຊ້ທີ່ດິນ ຕາມປະເພນີ ຢ່າງໜ້ອຍ 20 ປີ (ອີງຕາມ ມາດຕາ 130 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019).

ຂ. ຂະໜາດຕົ້ນໄມ້

- ວັດຮອບຂະໜາດ 30 ຊມ ຂຶ້ນໄປ.

### 3.3. ຂັ້ນຕອນ ການອອກຢັ້ງຢືນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຕ້ອງການໃບຢັ້ງຢືນ ຕົ້ນໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກ ຕ້ອງຍື່ນຄຳຮ້ອງ ຕາມແບບພິມ ປມ 1, ປມ 2, ປມ 3 ໃນເອກະສານຊ້ອນທ້າຍ ຂອງຄຳແນະນຳສະບັບນີ້.

#### 3.3.1. ການປະກອບເອກະສານ

ກ. ບຸກຄົນ ຕ້ອງປະກອບເອກະສານ ດັ່ງລຸ່ມນີ້:

1) ໃບຄຳຮ້ອງ;
2) ສຳເນົາໃບຢັ້ງຢືນກຳມະສິດໃນການຄອບຄອງ ແລະ ສິດນຳໃຊ້ທີ່ດິນຕ້ອງມີເອກະສານໃດໜຶ່ງໃນບັນດາເອກະສານລຸ່ມນີ້:
   - ໃບຕາດິນ;
   - ໃບຢັ້ງຢືນການນຳໃຊ້ທີ່ດິນ (ຕາມ ມາດຕາ 44 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019);
   - ໃບຢັ້ງຢືນສິດຄອບຄອງ ແລະ ສິດນຳໃຊ້ທີ່ດິນ ຕາມປະເພນີ ຢ່າງໜ້ອຍ 20 ປີ (ຕາມ ມາດຕາ 130 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019).

ຂ. ນິຕິບຸກຄົນ ຕ້ອງປະກອບເອກະສານ ດັ່ງລຸ່ມນີ້:

1) ໃບຄຳຮ້ອງ;
2) ສຳເນົາໃບທະບຽນວິສາຫະກິດ;
3) ສຳເນົາໃບຢັ້ງຢືນກຳມະສິດໃນການຄອບຄອງ ແລະ ສິດນຳໃຊ້ທີ່ດິນຕ້ອງມີເອກະສານໃດໜຶ່ງໃນບັນດາເອກະສານລຸ່ມນີ້:
   - ໃບຕາດິນ;

- ໃບຢັ້ງຢືນການນຳໃຊ້ທີ່ດິນ (ຕາມ ມາດຕາ 44 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019);
- ໃບຢັ້ງຢືນສິດຄອບຄອງ ແລະ ສິດນຳໃຊ້ທີ່ດິນ ຕາມປະເພນີ ຢ່າງໜ້ອຍ 20 ປີ (ຕາມ ມາດຕາ 130 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019).

ຄ. ການຈັດຕັ້ງ ຕ້ອງປະກອບເອກະສານ ດັ່ງລຸ່ມນີ້:

1) ໃບຄຳຮ້ອງ;
2) ສຳເນົາໃບຢັ້ງຢືນກຳມະສິດໃນການຄອບຄອງແລະ ສິດນຳໃຊ້ທີ່ດິນ ຕ້ອງມີເອກະສານໃດໜຶ່ງໃນບັນດາເອກະສານ ລຸ່ມນີ້:
   - ໃບຕາດິນ;
   - ໃບຢັ້ງຢືນການນຳໃຊ້ທີ່ດິນ (ຕາມ ມາດຕາ 44 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019);
   - ໃບຢັ້ງຢືນສິດຄອບຄອງ ແລະ ສິດນຳໃຊ້ທີ່ດິນ ຕາມປະເພນີ ຢ່າງໜ້ອຍ 20 ປີ (ຕາມ ມາດຕາ 130 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019).

### 3.3.2. ການອອກໃບຢັ້ງຢືນ

ເຈົ້າຂອງໄມ້ ຕ້ອງຍື່ນໃບຄຳຮ້ອງ ແລະ ເອກະສານທີ່ກ່ຽວຂ້ອງ ຕໍ່ ອົງການປົກຄອງບ້ານ ເພື່ອໃຫ້ຈຸງານກະສິກຳ ແລະ ປ່າໄມ້ບ້ານ ລົງເກັບກຳຂໍ້ມູນ, ຂຶ້ນບັນຊີ ແລ້ວສະເໜີ ອົງການປົກຄອງບ້ານ ອອກໃບຢັ້ງຢືນ ໂດຍການ ຮັບຮູ້ ແລະ ຢັ້ງຢືນ ຈາກຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ໂດຍປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:

1. ເຈົ້າຂອງໄມ້ ຍື່ນຄຳຮ້ອງ ແລະ ເອກະສານທີ່ກ່ຽວຂ້ອງ ຕໍ່ ອົງການປົກຄອງບ້ານ;
2. ອົງການປົກຄອງບ້ານ ກວດກາຄວາມຖືກຕ້ອງຂອງເອກະສານ ຕາມແບບພິມ ປມ 1 - ປມ 3;
3. ຈຸງານກະສິກຳ ແລະ ປ່າໄມ້ບ້ານ ລົງເກັບກຳຂໍ້ມູນໄມ້ຕົວຈິງ ແລະ ຂຶ້ນບັນຊີໄມ້ ພ້ອມເຊັນຢັ້ງຢືນຄວາມຖືກຕ້ອງ ຕາມແບບພິມ ປມ 4;
4. ອົງການປົກຄອງບ້ານ ເຊັນອະນຸມັດໃບຢັ້ງຢືນ;
5. ເຈົ້າຂອງໄມ້ ເສຍຄ່າທຳນຽມ 20.000 ກີບ/ໃບ ໃຫ້ອົງການປົກຄອງບ້ານ.

## 4. ການຂໍອະນຸຍາດຕັດ ຫຼື ຂຸດຄົ້ນ ແລະ ການເຄື່ອນຍ້າຍ

### 4.1. ການຂໍອະນຸຍາດຕັດ ຫຼື ຂຸດຄົ້ນ

ກ. ການຂໍອະນຸຍາດຕັດ ຫຼື ຂຸດຄົ້ນຕົ້ນໄມ້ທຳມະຊາດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີຈຸດປະສົງ ຕັດ ຫຼື ຂຸດຄົ້ນ ຕົ້ນໄມ້ທຳມະຊາດ ແມ່ນປະຕິບັດດັ່ງນີ້:

1. ເຈົ້າຂອງໄມ້ຕ້ອງນຳເອົາໃບຢັ້ງຢືນຕົ້ນໄມ້ທຳມະຊາດ ທີ່ອົງການປົກຄອງບ້ານອອກໃຫ້ ຊຶ່ງໃບຢັ້ງຢືນດັ່ງກ່າວຕ້ອງມີອາຍຸຢ່າງໜ້ອຍ 06 ເດືອນ ໄປແຈ້ງຕໍ່ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອລົງເກັບກຳຂໍ້ມູນໄມ້ຕົວຈິງ ພ້ອມບັນທຶກຂໍ້ມູນຄວາມຕ້ອງການຈະຕັດ ແຕ່ລະຄັ້ງໃສ່ດ້ານຫຼັງຂອງໃບຢັ້ງຢືນ;
2. ໄມ້ບັນຊີ I ໂດຍການອະນຸຍາດຂຸດຄົ້ນ ຈາກກະຊວງກະສິກຳ ແລະ ປ່າໄມ້ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ;
3. ໄມ້ບັນຊີ II ແລະ III ໂດຍການອະນຸຍາດຂຸດຄົ້ນ ຈາກພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຕາມການສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ.

ຂ. ການຂໍອະນຸຍາດຕັດ ຫຼື ຂຸດຄົ້ນ ໄມ້ປູກໃຫ້ໝາກ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີຈຸດປະສົງ ຕັດຕົ້ນໄມ້ປູກໃຫ້ໝາກ ແມ່ນປະຕິບັດ ດັ່ງນີ້:

1. ເຈົ້າຂອງໄມ້ຕ້ອງນຳເອົາ ໃບຢັ້ງຢືນຕົ້ນໄມ້ປູກໃຫ້ໝາກ ທີ່ອົງການປົກຄອງບ້ານອອກໃຫ້ ຊຶ່ງໃບຢັ້ງຢືນດັ່ງກ່າວ ຕ້ອງມີອາຍຸຢ່າງໜ້ອຍ 01 ເດືອນ ໄປແຈ້ງຕໍ່ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ເພື່ອລົງເກັບກຳຂໍ້ມູນໄມ້ຕົວຈິງ ພ້ອມບັນທຶກຂໍ້ມູນຄວາມຕ້ອງການຈະຕັດ ແຕ່ລະຄັ້ງໃສ່ດ້ານຫຼັງຂອງໃບຢັ້ງຢືນ;
2. ເຈົ້າຂອງໄມ້ຕ້ອງນຳເອົາໃບຢັ້ງຢືນໄປແຈ້ງຕໍ່ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ເພື່ອລົງ ເກັບກຳຂໍ້ມູນ ໄມ້ປູກໃຫ້ໝາກຕົວຈິງ ພ້ອມບັນທຶກຂໍ້ມູນຄວາມຕ້ອງການຈະຕັດ ແຕ່ລະຄັ້ງໃສ່ດ້ານຫຼັງຂອງໃບຢັ້ງຢືນ.

## 4.2. ການເຄື່ອນຍ້າຍໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກ ທີ່ມີໃບຢັ້ງຢືນຢູ່ພາຍໃນ ແລະ ສົ່ງອອກ

1. ໄມ້ທຳມະຊາດ ທີ່ເຄື່ອນຍ້າຍພາຍໃນເມືອງ ແລະ ຈາກເມືອງໜຶ່ງໄປຫາເມືອງອື່ນພາຍໃນແຂວງດຽວກັນ ຕ້ອງມີເອກະສານເຄື່ອນຍ້າຍຈາກ ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ. ສ່ວນການເຄື່ອນຍ້າຍໄມ້ຈາກ ແຂວງ ຫາ ແຂວງ ຕ້ອງມີເອກະສານ ເຄື່ອນຍ້າຍຈາກ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ;
2. ໄມ້ປູກໃຫ້ໝາກ ສາມາດເຄື່ອນຍ້າຍໄດ້ ໂດຍບໍ່ຈຳເປັນຂໍອະນຸຍາດ ແຕ່ເຈົ້າຂອງໄມ້ປູກ ຕ້ອງລາຍງານບໍລິມາດ ຫຼື ນໍ້າໜັກໄມ້ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນ;
3. ໄມ້ປູກໃຫ້ໝາກ ສາມາດສົ່ງອອກໄດ້ທຸກຮູບແບບທີ່ຜ່ານການປຸງແຕ່ງ ຫຼື ບໍ່ມີການປຸງແຕ່ງກໍ່ໄດ້. ສ່ວນໄມ້ທຳມະຊາດ ແມ່ນຕ້ອງປະຕິບັດ ຕາມລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກທີ່ລັດຖະບານກຳນົດເປັນແຕ່ລະໄລຍະ.

## 5. ການສິ້ນສຸດອາຍຸຂອງໃບຢັ້ງຢືນ

ໃບຢັ້ງຢືນ ຈະສິ້ນສຸດໄດ້ກໍ່ຕໍ່ເມື່ອຈຳນວນຕົ້ນໄມ້ ທີ່ໄດ້ລະບຸໄວ້ຢູ່ໃນໃບຢັ້ງຢືນໄດ້ຖືກ ຕັດ ຫຼື ຂຸດຄົ້ນໝົດ. ອົງການປົກຄອງບ້ານ ຕ້ອງບັນທຶກຂໍ້ມູນການສິ້ນສຸດໃສ່ປຶ້ມຕິດຕາມຕົ້ນໄມ້ທຳມະຊາດ, ໄມ້ປູກໃຫ້ໝາກ ຂອງບ້ານ ແລະ ບັນທຶກໃສ່ດ້ານຫຼັງຂອງໃບຢັ້ງຢືນ.

## 6. ສິດ ແລະ ພັນທະ ຂອງຜູ້ໄດ້ຮັບໃບຢັ້ງຢືນ

ຜູ້ໄດ້ຮັບໃບຢັ້ງຢືນ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ອຳນວຍຄວາມສະດວກ ໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່ ໃນການລົງກວດກາ, ເກັບກຳຂໍ້ມູນ ແລະ ສະໜອງເອກະສານ, ຂໍ້ມູນທີ່ກ່ຽວຂ້ອງ;
2. ສະເໜີ ອົງການທີ່ກ່ຽວຂ້ອງ ຕໍ່ການລະເມີດກົດໝາຍ ແລະ ລະບຽບການຂອງພະນັກງານ ແລະ ເຈົ້າໜ້າທີ່;
3. ຄຸ້ມຄອງ, ປົກປັກຮັກສາ, ຕັດ, ເຄື່ອນຍ້າຍ, ຊື້ ຂາຍ ແລະ ສົ່ງອອກ ຕົ້ນໄມ້ຂອງຕົນ;
4. ການຕັດໄມ້ທຳມະຊາດ ແລະ ຕົ້ນໄມ້ໃຫ້ໝາກ ເພື່ອໃຊ້ສອຍໃນຄອບຄົວ ແລະ ສາທາລະນະປະໂຫຍດນັ້ນ ຈະໄດ້ຮັບການຍົກເວັ້ນຄ່າຊົບພະກອນ, ຄ່າບຸລະນະ ແລະ ຄ່າພັນທະຕ່າງໆ. ສຳລັບ ການຕັດໄມ້ທຳມະຊາດ ເປັນສິນຄ້າ ຕ້ອງໄດ້ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນໆ ຕາມກົດໝາຍກຳນົດ.

## 7. ກົນໄກປະສານງານ

ສ້າງກົນໄກການປະສານງານ ລະຫວ່າງ ຂະແໜງການກ່ຽວຂ້ອງ ຂອງພາກລັດ, ພາກທຸລະກິດ ແລະ ປະຊາຊົນ ເພື່ອເຮັດໃຫ້ການ ໃບຢັ້ງຢືນຕົ້ນໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກ ເຂົ້າສູ່ລະບົບ ແລະ ການບໍລິການ ມີຄວາມຄ່ອງຕົວ ແລະ ວ່ອງໄວ, ຫຼຸດຜ່ອນຂັ້ນຕອນທາງວິຊາການຕ່າງໆ ທີ່ເຫັນວ່າເປັນສິ່ງກີດຂວາງ ແລະ ບໍ່ເປັນການຊຸກຍູ້ ການອອກໃບຢັ້ງຢືນ, ການອະນຸຍາດ ຕັດ ຫຼື ຂຸດຄົ້ນ ແລະ ການເຄື່ອນຍ້າຍ ກ່ຽວກັບ ຕົ້ນໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກ.

**8. ວິທີການຈັດຕັ້ງປະຕິບັດ**

1. ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ;
2. ມອບໃຫ້ ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ແລະ ອົງການປົກຄອງບ້ານ ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ດຳເນີນການຈັດຕັ້ງປະຕິບັດ ການອອກໃບຢັ້ງຢືນ ຕົ້ນໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກ ຕາມຄຳແນະນຳສະບັບນີ້;
3. ໃນການຈັດຕັ້ງປະຕິບັດຕົວຈິງ ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກແນວໃດ ໃຫ້ລາຍງານກະຊວງກະສິກຳ ແລະ ປ່າໄມ້ ຕາມຂັ້ນຕອນ ເພື່ອພິຈາລະນາຫາວິທີແກ້ໄຂຢ່າງທັນການ.
4. ສ່ວນໄມ້ໃຫ້ໝາກ ທີ່ປູກເປັນລະບົບ ແມ່ນໃຫ້ຂຶ້ນທະບຽນ ຕາມຄຳແນະນຳ ຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 2492/ກປ, ລົງວັນທີ 23 ທັນວາ 2020.

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ໄດ້ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ລັດຖະມົນຕີ**

ທອງພັດ ວົງມະນີ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ.........................

ເມືອງ.........................

ບ້ານ......................... ເລກທີ........../............

ວັນທີ.........................

## ໃບຢັ້ງຢືນ ຕົ້ນໄມ້ທຳມະຊາດ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ໃບຄຳຮ້ອງຂໍຢັ້ງຢືນ ລົງວັນທີ...............................

## ອົງການປົກຄອງບ້ານ ອອກໃບຢັ້ງຢືນ ຕົ້ນໄມ້ທຳມະຊາດ ໃຫ້ແກ່:

ທ້າວ ຫຼື ນາງ...................................................................ອາຊີບ.................................

ທີ່ຢູ່ປະຈຸບັນ ບ້ານ:...................................., ເມືອງ:........................., ແຂວງ:.......................

ສະຖານທີ່ ບ້ານ:...................................., ເມືອງ:........................., ແຂວງ:.......................

ຈຳນວນຊະນິດພັນໄມ້:..................................ຊະນິດ

1. ຊະນິດໄມ້:...............................................ຈຳນວນ.............ຕົ້ນ
2. ຊະນິດໄມ້:...............................................ຈຳນວນ.............ຕົ້ນ
3. ຊະນິດໄມ້:...............................................ຈຳນວນ.............ຕົ້ນ
4. ຊະນິດໄມ້:...............................................ຈຳນວນ.............ຕົ້ນ
5. ຊະນິດໄມ້:...............................................ຈຳນວນ.............ຕົ້ນ
6. ຊະນິດໄມ້:...............................................ຈຳນວນ.............ຕົ້ນ
7. ຊະນິດໄມ້:...............................................ຈຳນວນ.............ຕົ້ນ
8. ຊະນິດໄມ້:...............................................ຈຳນວນ.............ຕົ້ນ

ດັ່ງນັ້ນ, ຈຶ່ງອອກໃບຢັ້ງຢືນຕົ້ນໄມ້ທຳມະຊາດນີ້ໄວ້ ເພື່ອເປັນຫຼັກຖານ.

**ຮັບຮູ້ ແລະ ຢັ້ງຢືນ**

**ຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ** **ນາຍບ້ານ**

## ບັນທຶກການຕັດໄມ້ທຳມະຊາດ

| ວ/ດ/ປ | ຊະນິດໄມ້ | ຈຳນວນຕົ້ນ | ຮັບຮູ້ໂດຍ |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |
| | | | |

## ບັນທຶກການເຄື່ອນຍ້າຍໄມ້ທຳມະຊາດ

| ວ/ດ/ປ | ຊະນິດໄມ້ | ບໍລິມາດ ຫຼື ນໍ້າໜັກໄມ້ | ຮັບຮູ້ໂດຍ |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ.........................

ເມືອງ.........................

ບ້ານ.......................... ເລກທີ............/..............

ວັນທີ.........................

## <u>ໃບຢັ້ງຢືນ ໄມ້ປູກໃຫ້ໝາກ</u>

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ໃບຄໍາຮ້ອງຂໍຢັ້ງຢືນ ໄມ້ປູກໃຫ້ໝາກ ຄັ້ງວັນທີ...............................

## <u>ອີງການປົກຄອງບ້ານ ອອກໃບຢັ້ງຢືນ ໄມ້ປູກໃຫ້ໝາກ ໃຫ້ແກ່:</u>

ທ້າວ ຫຼື ນາງ.............................................ອາຊີບ.........................................................

ທີ່ຢູ່ປະຈຸບັນ ບ້ານ:...................................., ເມືອງ:........................,ແຂວງ:........................

ສະຖານທີ່ ບ້ານ:......................................., ເມືອງ:........................,ແຂວງ:........................

ຈໍານວນຊະນິດພັນໄມ້:..................................ຊະນິດ

1. ຊະນິດໄມ້:......................................ຈໍານວນ........................ຕົ້ນ
2. ຊະນິດໄມ້:......................................ຈໍານວນ........................ຕົ້ນ
3. ຊະນິດໄມ້:......................................ຈໍານວນ........................ຕົ້ນ
4. ຊະນິດໄມ້:......................................ຈໍານວນ........................ຕົ້ນ
5. ຊະນິດໄມ້:......................................ຈໍານວນ........................ຕົ້ນ
6. ຊະນິດໄມ້:......................................ຈໍານວນ........................ຕົ້ນ
7. ຊະນິດໄມ້:......................................ຈໍານວນ........................ຕົ້ນ
8. ຊະນິດໄມ້:......................................ຈໍານວນ........................ຕົ້ນ

ດັ່ງນັ້ນ, ຈຶ່ງອອກໃບຢັ້ງຢືນຕົ້ນໄມ້ໃຫ້ໝາກນີ້ໄວ້ ເພື່ອເປັນຫຼັກຖານ.

**ຮັບຮູ້ ແລະ ຢັ້ງຢືນ**

**ຫົວໜ້າ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ** **ນາຍບ້ານ**

## ບັນທຶກການຕັດໄມ້ປູກໃຫ້ໝາກ

| ວ/ດ/ປ | ຊະນິດໄມ້ | ຈຳນວນຕົ້ນ | ຮັບຮູ້ໂດຍ |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |
| | | | |

## ບັນທຶກການເຄື່ອນຍ້າຍໄມ້ປູກໃຫ້ໝາກ

| ວ/ດ/ປ | ຊະນິດໄມ້ | ບໍລິມາດ ຫຼື ນ້ຳໜັກໄມ້ | ຮັບຮູ້ໂດຍ |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |

**ປມ 1**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ..........................

ເມືອງ............................

ບ້ານ............................

# <u>ໃບຄໍາຮ້ອງ</u>

(ສໍາລັບ ບຸກຄົນ)

ຮຽນ: ..................................................................................

ເລື່ອງ: ..................................................................................

ຊື່ ແລະ ນາມສະກຸນທ້າວ/ນາງ

.........................................................................................

ວັນ/ເດືອນ/ປີເກີດ:....../....../.........ເຊື້ອຊາດ:.............ສັນຊາດ:.............ເລກບັດປະຈໍາຕົວ...............

ເຮືອນເລກທີ:.................ເລກສໍາມະໂນຄົວ:.....................ເບີໂທລະສັບ:...................................

ປະຈຸບັນຢູ່ບ້ານ:.......................ເມືອງ:................................ ແຂວງ:..................................

ສະຖານທີ່ ☐ ໄມ້ທໍາມະຊາດ ☐ ໄມ້ປູກໃຫ້ໝາກ:..................................................................

..........................................................................................................

ຂໍ້ມູນ ☐ ໄມ້ທໍາມະຊາດ ☐ ໄມ້ປູກໃຫ້ໝາກ: ມີ:.........ຊະນິດ

1. ຊະນິດໄມ້:................................................ຈໍານວນ.............ຕົ້ນ
2. ຊະນິດໄມ້:................................................ຈໍານວນ.............ຕົ້ນ
3. ຊະນິດໄມ້:................................................ຈໍານວນ.............ຕົ້ນ
4. ຊະນິດໄມ້:................................................ຈໍານວນ.............ຕົ້ນ
5. ຊະນິດໄມ້:................................................ຈໍານວນ.............ຕົ້ນ
6. ຊະນິດໄມ້:................................................ຈໍານວນ.............ຕົ້ນ
7. ຊະນິດໄມ້:................................................ຈໍານວນ.............ຕົ້ນ
8. ຊະນິດໄມ້:................................................ຈໍານວນ.............ຕົ້ນ

ຂ້າພະເຈົ້າຂໍປະຕິຍານວ່າ ຂໍ້ມູນທີ່ຂຽນມາຂ້າງເທິງນີ້ ລ້ວນແຕ່ແມ່ນຄວາມຈິງທຸກປະການ ແລະ ຖ້າມີການບິດເບືອນ ຈະຮັບຜິດຊອບຕາມ ກົດໝາຍແຫ່ງ ສປປ ລາວ.

ທີ່..............................ລົງວັນທີ:....../....../..........

ລາຍເຊັນຜູ້ຮ້ອງຂໍ

# ເອກະສານຄັດຕິດ

**ຊຸດຄໍາຮ້ອງຂໍຢັ້ງຢືນ ຂອງບຸກຄົນ**

1) ໃບຄໍາຮ້ອງຂໍຢັ້ງຢືນ;
2) ສໍາເນົາ ເອກະສານໃດໜຶ່ງ ລຸ່ມນີ້::
   - ໃບຕາດິນ;
   - ໃບຢັ້ງຢືນການນໍາໃຊ້ທີ່ດິນ (ຕາມ ມາດຕາ 44 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019);
   - ໃບຢັ້ງຢືນສິດຄອບຄອງ ແລະ ສິດນໍາໃຊ້ທີ່ດິນ ຕາມປະເພນີ ຢ່າງໜ້ອຍ 20 ປີ (ຕາມ ມາດຕາ 130 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019).

**ປມ 2**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ..........................

ເມືອງ...........................

ບ້ານ............................

# <u>ໃບຄໍາຮ້ອງ</u>

(ສໍາລັບ ນິຕິບຸກຄົນ)

ຮຽນ: ..........................................................................................

ເລື່ອງ: ..........................................................................................

ຊື່ ແລະ ນາມສະກຸນເຈົ້າຂອງວິສາຫະກິດ:......................................................................

ຊື່ວິສາຫະກິດ:..........................................................................................................

ຊື່ວິສາຫະກິດ ເປັນພາສາສາກົນ:....................................................................................

ເລກລະຫັດວິສາຫະກິດ:.................................................................................................

ທີ່ຕັ້ງສໍານັກງານ ບ້ານ:........................... ເມືອງ:.............................. ແຂວງ: .................

ເບີໂທ:.................................................ອີເມວ (ຖ້າມີ):............................................

ສະຖານທີ່ ☐ ໄມ້ທໍາມະຊາດ ☐ ໄມ້ປູກໃຫ້ໝາກ:..................................................................

..........................................................................................................................

ຂໍ້ມູນ ☐ ໄມ້ທໍາມະຊາດ ☐ ໄມ້ປູກໃຫ້ໝາກ: ມີ:.........ຊະນິດ

1. ຊະນິດໄມ້:................................................ຈໍານວນ.............ຕົ້ນ
2. ຊະນິດໄມ້:................................................ຈໍານວນ.............ຕົ້ນ
3. ຊະນິດໄມ້:................................................ຈໍານວນ.............ຕົ້ນ
4. ຊະນິດໄມ້:................................................ຈໍານວນ.............ຕົ້ນ
5. ຊະນິດໄມ້:................................................ຈໍານວນ.............ຕົ້ນ
6. ຊະນິດໄມ້:................................................ຈໍານວນ.............ຕົ້ນ
7. ຊະນິດໄມ້:................................................ຈໍານວນ.............ຕົ້ນ
8. ຊະນິດໄມ້:................................................ຈໍານວນ.............ຕົ້ນ

ຂ້າພະເຈົ້າຂໍປະຕິຍານວ່າ ຂໍ້ມູນທີ່ຂຽນມາຂ້າງເທິງນີ້ ລ້ວນແຕ່ແມ່ນຄວາມຈິງທຸກປະການ ແລະ ຖ້າມີການບິດເບືອນ ຈະຮັບຜິດຊອບຕາມ ກົດໝາຍແຫ່ງ ສປປ ລາວ.

ທີ່.............................ລົງວັນທີ:....../....../..........

ລາຍເຊັນຜູ້ຮ້ອງຂໍ

# ເອກະສານຄັດຕິດ

**ຊຸດຄຳຮ້ອງຂໍຢັ້ງຢືນ ຂອງນິຕິບຸກຄົນ**

1) ໃບຄຳຮ້ອງຂໍ;
2) ສຳເນົາໃບທະບຽນວິສາຫະກິດ;
3) ສຳເນົາໃບຢັ້ງຢືນກຳມະສິດໃນການຄອບຄອງ ແລະ ສິດນຳໃຊ້ທີ່ດິນ ຂອງຕິນິບຸກຄົນ ໃນບັນດາ ເອກະສານໃດໜຶ່ງ ລຸ່ມນີ້:
   - ໃບຕາດິນ;
   - ໃບຢັ້ງຢືນການນຳໃຊ້ທີ່ດິນ (ຕາມ ມາດຕາ 44 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019);
   - ໃບຢັ້ງຢືນສິດຄອບຄອງ ແລະ ສິດນຳໃຊ້ທີ່ດິນ ຕາມປະເພນີ ຢ່າງໜ້ອຍ 20 ປີ (ຕາມ ມາດຕາ 130 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019).

**ປມ 3**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ..........................

ເມືອງ...........................

ບ້ານ............................

## <u>ໃບຄໍາຮ້ອງ</u>

(ສໍາລັບ ການຈັດຕັ້ງ)

ຮຽນ: ...........................................................................................

ເລື່ອງ: ...........................................................................................

ຊື່ ແລະ ນາມສະກຸນ ຫົວໜ້າ ການຈັດຕັ້ງ:...........................................................................

ຊື່ ການຈັດຕັ້ງ:.................................................................................................................

ຊື່ ການຈັດຕັ້ງ ເປັນພາສາສາກົນ:.....................................................................................

ທີ່ຕັ້ງຂອງການຈັດຕັ້ງ: ບ້ານ:......................ເມືອງ:.........................ແຂວງ: ..........................

ເບີໂທ:................................................ອີເມວ (ຖ້າມີ):...........................................

ສະຖານທີ່ ☐ ໄມ້ທຳມະຊາດ ☐ ໄມ້ປູກໃຫ້ໝາກ:.................................................................

.........................................................................................................................................

ຂໍ້ມູນ ☐ ໄມ້ທຳມະຊາດ ☐ ໄມ້ປູກໃຫ້ໝາກ: ມີ:.........ຊະນິດ

1. ຊະນິດໄມ້:...............................................ຈຳນວນ.............ຕົ້ນ
2. ຊະນິດໄມ້:...............................................ຈຳນວນ.............ຕົ້ນ
3. ຊະນິດໄມ້:...............................................ຈຳນວນ.............ຕົ້ນ
4. ຊະນິດໄມ້:...............................................ຈຳນວນ.............ຕົ້ນ
5. ຊະນິດໄມ້:...............................................ຈຳນວນ.............ຕົ້ນ
6. ຊະນິດໄມ້:...............................................ຈຳນວນ.............ຕົ້ນ
7. ຊະນິດໄມ້:...............................................ຈຳນວນ.............ຕົ້ນ
8. ຊະນິດໄມ້:...............................................ຈຳນວນ.............ຕົ້ນ

ຂ້າພະເຈົ້າຂໍປະຕິຍານວ່າ ຂໍ້ມູນທີ່ຂຽນມາຂ້າງເທິງນີ້ ລ້ວນແຕ່ແມ່ນຄວາມຈິງທຸກປະການ ແລະ ຖ້າມີການບິດເບືອນ ຈະຮັບຜິດຊອບຕາມ ກົດໝາຍແຫ່ງ ສປປ ລາວ.

ທີ່.............................ລົງວັນທີ:....../....../..........

ລາຍເຊັນຜູ້ຮ້ອງຂໍ

# <u>ເອກະສານຄັດຕິດ</u>

**<u>ຊຸດຄຳຮ້ອງຂໍຢັ້ງຢືນ ຂອງການຈັດຕັ້ງ</u>**

1) ໃບຄຳຮ້ອງຂໍ;
2) ສຳເນົາໃບຢັ້ງຢືນກຳມະສິດ ໃນການຄອບຄອງ ແລະ ສິດນຳໃຊ້ທີ່ດິນ ທີ່ເປັນຂອງການຈັດຕັ້ງ ໃນບັນດາເອກະສານ ໃດໜຶ່ງ ລຸ່ມນີ້:
   - ໃບຕາດິນ;
   - ໃບຢັ້ງຢືນການນຳໃຊ້ທີ່ດິນ (ຕາມ ມາດຕາ 44 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019);
   - ໃບຢັ້ງຢືນສິດຄອບຄອງ ແລະ ສິດນຳໃຊ້ທີ່ດິນ ຕາມປະເພນີ ຢ່າງໜ້ອຍ 20 ປີ (ຕາມ ມາດຕາ 130 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019).

**ປມ 4**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ..........................
ເມືອງ...........................
ບ້ານ............................

# ແບບຟອມເກັບກຳຂໍ້ມູນ ເພື່ອຂໍໃບຢັ້ງຢືນ

ຜູ້ຂໍໃບຢັ້ງຢືນ (ເລືອກ 1 ຄຳຕອບ):

☐ພາກລັດ, ຊື່ອົງການຈັດຕັ້ງ:...........................................................................
☐ພາກປະຊາຊົນ, ຊື່ ແລະ ນາມສະກຸນ:............................ເລກບັດປະຈຳຕົວ.......................
☐ພາກບໍລິສັດ, ຊື່ວິສາຫະກິດ:...........................................................................
ຊື່ວິສາຫະກິດ ເປັນພາສາສາກົນ.................................... ເລກລະຫັດວິສາຫະກິດ:..............
☐ພາກບໍລິສັດ+ປະຊາຊົນ, ຊື່ວິສາຫະກິດ:.......................... ເລກລະຫັດວິສາຫະກິດ:................
ຊື່ ແລະ ນາມສະກຸນ ປະຊາຊົນ:..........................................ເລກບັດປະຈຳຕົວ...............
☐ຊື່ອົງການຈັດຕັ້ງອື່ນໆ:.........................................................................

ທີ່ຢູ່ປະຈຸບັນ: ...................... ເມືອງ....................... ແຂວງ.......................ເບີໂທ:..............
ຕາຕະລາງຂ້າງລຸ່ມນີ້ ແມ່ນໃຫ້ໝາຍ √ ໃສ່ຫ້ອງ "ມີ", "ແມ່ນ" ແລະ "ບໍ່". ຄຳອະທິບາຍເພີ່ມແມ່ນໃຫ້ຂຽນໃສ່ຫ້ອງ "ຂໍ້ມູນເພີ່ມ".

| ລ/ດ | ລາຍການ | ມີ | ບໍ່ | ຂໍ້ມູນເພີ່ມ |
|---|---|---|---|---|
| I | **ຊຸດເອກະສານແມ່ນຄົບຖ້ວນບໍ່?** | | | |
| 1.1 | ໃບຄຳຮ້ອງ ຂໍໃບຢັ້ງຢືນ | | | |
| 1.2 | ສຳເນົາໃບຢັ້ງຢືນກຳມະສິດ ຄອບຄອງ ແລະ ນຳໃຊ້ທີ່ດິນ | | | |
| II | **ເງື່ອນໄຂການຢັ້ງຢືນ** | **ແມ່ນ** | **ບໍ່** | **ຂໍ້ມູນເພີ່ມ** |
| 2.1 | **ດ້ານກຳມະສິດຄອບຄອງ ມີເອກະສານໃດໜຶ່ງ ລຸ່ມນີ້** | | | |
| - | ໃບຕາດິນ | | | |
| - | ໃບຢັ້ງຢືນການນຳໃຊ້ທີ່ດິນ (ຕາມ ມາດຕາ 44 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019) | | | |
| - | ໃບຢັ້ງຢືນສິດຄອບຄອງ ແລະ ສິດນຳໃຊ້ທີ່ດິນ ຕາມປະເພນີ ຢ່າງໜ້ອຍ 20 ປີ (ອີງຕາມ ມາດຕາ 130 ຂອງ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019) | | | |
| 2.2 | ຂະໜາດຕົ້ນໄມ້ | | | |
| - | ວັດຮອບຂະໜາດ 30 ຊມ ຂຶ້ນໄປ | | | |

<table>
<tr><td>III</td><td>ຂໍ້ມູນ ☐ ໄມ້ທຳມະຊາດ ☐ ໄມ້ປູກໃຫ້ໝາກ: ມີ:.........ຊະນິດ<br>1. ຊະນິດໄມ້:...............................................ຈຳນວນ.............ຕົ້ນ<br>2. ຊະນິດໄມ້:...............................................ຈຳນວນ.............ຕົ້ນ<br>3. ຊະນິດໄມ້:...............................................ຈຳນວນ.............ຕົ້ນ<br>4. ຊະນິດໄມ້:...............................................ຈຳນວນ.............ຕົ້ນ<br>5. ຊະນິດໄມ້:...............................................ຈຳນວນ.............ຕົ້ນ<br>6. ຊະນິດໄມ້:...............................................ຈຳນວນ.............ຕົ້ນ<br>7. ຊະນິດໄມ້:...............................................ຈຳນວນ.............ຕົ້ນ<br>8. ຊະນິດໄມ້:...............................................ຈຳນວນ.............ຕົ້ນ</td></tr>
</table>

<table>
<tr><td><u>ຄຳເຫັນ</u>: ☐ ບໍ່ເຫັນດີອະນຸມັດໃບຢັ້ງຢືນ ຍ້ອນ...............................<br>..........................................................................<br>..........................................................................<br>..........................................................................<br>..........................................................................<br>..........................................................................<br>..........................................................................</td><td>☐ ເຫັນດີອະນຸມັດໃບຢັ້ງຢືນ</td></tr>
</table>

ທີ່....................ວັນທີ............ເດືອນ.........ປີ...........

ລາຍເຊັນ, ຊື່ ແລະ ນາມສະກຸນ ຜູ້ເກັບກຳຂໍ້ມູນ

**ປມ 5**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ..........................

ເມືອງ...........................

ບ້ານ............................

## ແບບຟອມເກັບກຳຂໍ້ມູນ ບັນຊີໄມ້ທ່ອນ ທີ່ຕັດຈາກ ໃບຢັ້ງຢືນ ຕົ້ນໄມ້ທຳມະຊາດ

## ສະບັບເລກທີ...............ລົງວັນທີ...................

| ລ/ດ | ຊະນິດໄມ້ | ລວງຍາວ | ໜ້າຕາງ | ບໍລິມາດໄມ້ | ໝາຍເຫດ |
|---|---|---|---|---|---|
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |

ທີ່....................ວັນທີ.............ເດືອນ.........ປີ............

ລາຍເຊັນ, ຊື່ ແລະ ນາມສະກຸນຜູ້ບັນທຶກ

**ປມ 6**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ..........................

ເມືອງ...........................

ບ້ານ............................

## ແບບຟອມເກັບກຳຂໍ້ມູນ ບັນຊີໄມ້ທ່ອນ ທີ່ຕັດຈາກ ໃບຢັ້ງຢືນ ຕົ້ນໄມ້ໃຫ້ໝາກ ສະບັບເລກທີ...............ລົງວັນທີ...................

| ລ/ດ | ຊະນິດໄມ້ | ລວງຍາວ | ໜ້າຕາງ | ບໍລິມາດໄມ້ | ໝາຍເຫດ |
|---|---|---|---|---|---|
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |

ທີ່....................ວັນທີ.............ເດືອນ.........ປີ............

ລາຍເຊັນ, ຊື່ ແລະ ນາມສະກຸນຜູ້ບັນທຶກ